# ເຊີນຮ່ວມຜູກແຂນຫຼານນ້ອຍ

ໂດຍ: ບ່າວຫຼັກເຈັດ

ຂ້ອຍຂໍເຊີນປ່າວຮ້ອງ    ກ້ອງສົ່ງຊົມຮົມຄຣູ    ເຮົາແລ້ວ
ຢູ່ທິດທາງແຖວໃດ    ໃຫ້ຂ່າວຄາວກັນດ້ວຍ
ຊ່ວຍຕໍ່ຄວາມຂານຊີ້    ໃຜບໍ່ມີອີເມລ໌ສົ່ງ
ບອກເຖິງຈຸດປະສົງ    ສົ່ງບອກກັນໃຫ້ຮູ້ແຈ້ງ ຖແລງຂໍໃຫ້ທົ່ວເຖິງ

ສາວຫຼັກເຈັດເພິ່ນຊາບຊຶ້ງ    ໄດ້ຂໍເພິ່ງຖແລງການ ຂ້ອຍແລ້ວ
ຜູກແຂນຫຼານຄົນທໍາອິດ    ເຮັດມິດເສີຍບໍ່ເປັນໄດ້
ຍາຕມິດທາງໄກໃກ້    ຫົນໃດຂໍເຊີນທ່ານ    ມາເດີ
ທັງເພື່ອນຄູອາຈານ ຊາວຫຼັກເຈັດທຸກທົ່ວໜ້າ ໃຫ້ມາລ້ອມອວຍພອນ

ສິບ ໂມງເຊົ້າແມ່ນເລີ້ມຕົ້ນ    ວັນທີແມ່ນ ສິບເອັດ
ມິຖຸນາ ຫຼື ເດືອນ ຈູນ    ເປັນມື້ບຸນຄູນຄໍ້າ
ປຶກສາບໍາຊູມຄົນເຖົ້າ    ວັນເສົາດີເປັນມື້ແກ່ ວ່າຊ້ານ
ສຸຂພາບຜູ້ເປັນແມ່    ກັບຫຼານແອຜູ້ນ້ອຍ    ແຂງແຮງກ້າຢູ່ດີ    ວ່າເດ

ຖືວ່າໃນວັນນີ້    ຊິນໍາໂຊກຖືຊັຍ    ເພິ່ນວ່າ
ເຊີນເພື່ອນຝູງທັງຫຼາຍ    ມາຮ່ວມຍິນດີດ້ວຍ
ມາອວຍພອນໃຫ້ຫຼານນ້ອຍ    ຈະເຮີນໄວໃຫ້ລ້ຽງງ່າຍ
ໃຫ້ເຄາະເຂັນເວນກາຍ    ປັນຍາໄວໃຫຣ່ກ້າ    ເຊີດຊູໜ້າໂຄຕວົງສ໌

ຂຽນອີເມລ໌ປະກາດໂປ້ງ    ຂຽນສົ່ງຫາລຸງໄວ    ກ່ອນແລ້ວ
ຈຶ່ງຮີບໄປເປັນໝໍພອນ    ຊິປ່ອນຊອງ ໃຫ້ຄາຍເຈົ້າ    $20
ສ່ວນລຸງລາ ໂຈມພາເຂົ້າ    ທັງພາຂວັນບໍ່ໃຫ້ວ່ຽງ    ຮະວັງເດີ
ແມ່ຕູ້ດອນ ຊິຮັບລ້ຽງ    ງົວເຜົາປີ້ງຈໍ້າແຈ່ວບີ    ອົມເດ

ລຸງໄວເອີຍ    ກ່ອນເຈົ້າບິນມານີ້    ຫິ້ວມາແມ່ເດີ ເບຍລາວ
ຢ່າໄດ້ເມົາຫ່ວງນໍາຊອງ    ໃຫ້ຫອງກອນສູຕຂວັນໄວ້

ຄື ຄຳສັດເຄໄທ້ ກັບ ສີສີ ໃຫ້ມັນຫຼ່ຽນ ໃດເດີ
ໃຫ້ຮຽນເບິ່ງຕີນໄກ່ ຄາງກະໄຕໄກ່ຊີ້ ຊີດີຮ້າຍກ່າວໃຫ້ຄື ເດີລຸງເດີ

ສູຕ ສີສີ ໃນມື້ນີ້ ແມ່ນມື້ສັນວັນດີ
ຂ້ອຍຂໍແປສີສີ ມື້ນີ້ດີໃຫ້ລຸງເກົ້
ຄື ຄາເລີ໋ ຄາເລີ້ ເຜີແປໄປໃຫ້ຄົນເຫ່
ທູເດ ອີສ ກູດເດ ດີແທ້ເດຄຳເພີ່ນແກ້ ແປແລ້ວຈັ່ງແມ່ນດີ ລຸງໄອເອີຍ....

ພິເສດສຸດໄປກວ່ານີ້ ຂໍເຊີນດ່ວນນາງມະທີ
ພ້ອມສາມີເວສຊາດົກ ຍົກຍື່ນມາຫາຫຼານນ້ອຍ
ຄອຍມາເປັນຄົນເຖົ້າ ມົງຄົລຊັຍ ເອີ້ນຂວັນຊ່ອຍ
ອວຍພອນຫຼານຜູ້ນ້ອຍ ໃຫ້ບຸນຄ້ຳໜ່ຳຊູ ເຊີນເຍີ

ສົມສັກເອີຍ... ຄັນຢາກເປັນພໍ່ຕູ້ ໃຫ້ບິນດ່ວນທາງໄກ ເດີໜໍ
ຢ່າໄດ້ມົວລ່ຳໄລ ແຕ່ຢ້ານເສັຽເງິນຮ້ອຍ
ກະເປົ໋າໜັກ ຢ່າໃຈນ້ອຍ ຖອຍຫຼັງຍາມຊິຈ່າຍ ເດີສັກເດີ
ເຮົາເປັນຫ່ວງສະຫາຍ ພາຍປີນຝຶດບໍ່ສິ້ງ ຍິງເລື້ອຍຍ້ອນລູກແພງ ບໍ່ດີໃດ

ສ່ວນວັນທອງ ຂໍບອກແຈ້ງ ແບ່ງປັນຊ່ວຍທາງດົນຕຣີ ເດີຍາເດີ
ໃຫ້ແມ່ນມີໃຈສັທທາ ໃຫ້ເຊີ່ນມາ ໂຊວ໌ ຕັ້ງ
ເອົາໃຫ້ເຖິງໃຈເພື່ອນ ຢາກຂໍເຊີນປະກອບສ່ວນ ແມ່ເດີ
ມີດົນຕຣີມ່ວນໆ ຊວນໜໍສັກມາຊ່ວຍເຫຼັ້ນ ໃຫ້ເຫັນແທ້ແກ່ໝູ່ເຮົາ ເດີໜໍເດີ

ເສັ້ຽຄຳມີ ເພີ່ນກໍປອດຈ້າວໆ ຟ້າວຂົນເຄື່ອງຕຽມໂຕ
ທັງ ເອັກສ໌ ໂອ ຂອງດີ ວິເອັສໂອພີ ຫຼາຍແກ້ວ
ແນວໝູ່ ຂົນມາໄດ້ ໄກໜ້ອຍຂັບຣົດຮອດ
ເອົາຄີບອຕຣ໌ ໃສ່ຣົດພ້ອມ ເຮົາຊິປ້ອມ ແລ່ນຂຶ້ນຍົນ ພໍ້ກັນເດີໜໍເດີ